ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
=====0000====

ທະນາຄານແຫ່ງ ສປປ ລາວ
ກົມຈັດຕັ້ງແລະພະນັກງານ

ເລກທີ 196/ກຈພ
ນະຄອນຫຼວງວຽງຈັນ, ວັນທີ 09 NOV 2016

ຫ້ອງການ ຄຄຊ
ເລກທີ 1094
ວັນທີ 09 NOV 2016
ໂທລະສັບ 021 217770

## ແຈ້ງການ

**ເຖິງ:** - ທ່ານ ຫົວໜ້າກົມ ແລະທຽບເທົ່າພາຍໃນ ທະນາຄານແຫ່ງ ສປປ ລາວ.
- ທ່ານ ຜູ້ອຳນວຍການທະນາຄານທຸລະກິດລັດ-ລັດຮຸ້ນສ່ວນ.

**ເລື່ອງ:** ການປັບປຸງການຈັດຕັ້ງຢູ່ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານສົ່ງເສີມກະສິກຳ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຜູ້ຊ່ວຍຜູ້ວ່າການທະນາຄານແຫ່ງ ສປປ ລາວ;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການອະນຸມັດໃຫ້ພະນັກງານອອກພັກການ-ຮັບເບັ້ຍບຳນານ;
- ອີງຕາມຂໍ້ຕົກລົງຂອງຜູ້ວ່າການ ທຫລ ວ່າດ້ວຍການຍົກຍ້າຍ ແລະ ແຕ່ງຕັ້ງພະນັກງານ.

ກົມຈັດຕັ້ງແລະພະນັກງານ ທຫລ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະເດືອນ 10-11/2016 ຜ່ານມາ, ຂັ້ນເທິງໄດ້ອະນຸມັດໃຫ້ພະນັກງານອອກພັກການ-ຮັບເບັ້ຍບຳນານ ແລະ ປັບປຸງການຈັດຕັ້ງຂັ້ນຄະນະພະແນກ, ຄະນະກົມ ແລະ ທຽບເທົ່າຂຶ້ນໄປ ຢູ່ບັນດາກົມພາຍໃນ ທຫລ ແລະ ທະນາຄານສົ່ງເສີມກະສິກຳ; ເພື່ອຄວາມສະດວກໃນການພົວພັນປະສານໃນວຽກງານທີ່ກ່ຽວຂ້ອງ, ກົມຈັດຕັ້ງແລະພະນັກງານ ຈຶ່ງແຈ້ງມາຍັງທ່ານຮັບຊາບຕໍ່ກັບການປັບປຸງການຈັດຕັ້ງດັ່ງກ່າວ, ລາຍລະອຽດດັ່ງນີ້:

### I. ຫ້ອງການ.

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນະ ຈັນຕະລືວົງ** ຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ ເປັນຜູ້ຊ່ວຍວຽກຜູ້ວ່າການທະນາຄານແຫ່ງ ສປປ ລາວ;

2. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ຈິດຕະກອນ ຈິດຕະພົງ** ຮອງຫົວໜ້າພະແນກສະຖິຕິດຸນການຊຳລະກັບຕ່າງປະເທດ, ກົມນະໂຍບາຍເງິນຕາ ເປັນເລຂານຸການຂອງທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ.

### II. ສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້.

1. ອະນຸມັດໃຫ້**ທ່ານ ທອງຈະເລີນ ເຄນມົ່ງມົງຄົນ** ຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ອອກພັກການ-ຮັບເບັ້ຍບຳນານ;

2. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ນ. ອ່ອນຈັນ ໄຊຄຳພັງ** ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ເປັນຮັກສາການຫົວໜ້າສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້.

**III. ກົມເຕັກໂນໂລຊີຂໍ້ມູນຂ່າວສານ.**

1. ອະນຸມັດໃຫ້**ທ່ານ ພານທອງ ກອງວົງສາ** ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ ອອກພັກການ-ຮັບເບ້ຍບໍານານ.

**IV. ກົມກວດກາພາຍໃນ.**

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ສົມພອນ ວົງສະຫວັນ** ຮອງຜູ້ອໍານວຍການທະນາຄານສົ່ງເສີມກະສິກໍາ ເປັນຮອງຫົວໜ້າກົມກວດກາພາຍໃນ;

2. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ວິຊະນຸກອນ ພິມມະວົງ** ຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ, ສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ ເປັນຫົວໜ້າພະແນກສັງລວມ ແລະ ກວດກາທົ່ວໄປ, ກົມກວດກາພາຍໃນ.

**V. ກົມຄຸ້ມຄອງທະນາຄານທຸລະກິດ.**

1. ແຕ່ງຕັ້ງ**ທ່ານ ມະໂນລິດ ຊຸມພົນພັກດີ** ຫົວໜ້າພະແນກກວດກາທະນາຄານທຸລະກິດ ເປັນຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ.

**VI. ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.**

1. ແຕ່ງຕັ້ງ**ທ່ານ ສຽວສະຫວາດ ທິລະກຸນ** ຫົວໜ້າພະແນກຄຸ້ມຄອງການອອກຈໍາໜ່າຍຫຼັກຊັບ ເປັນຮອງຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

**VII. ກົມນະໂຍບາຍເງິນຕາ.**

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ສະຫວັນດວງຈິດ ແສງເດືອນ** ຮອງຫົວໜ້າພະແນກບໍລິຫານຄັງສໍາຮອງເງິນຕາຕ່າງປະເທດ, ກົມບໍລິການທະນາຄານ ເປັນຫົວໜ້າພະແນກສະຖິຕິດຸນການຊໍາລະກັບຕ່າງ ປະເທດ, ກົມນະໂຍບາຍເງິນຕາ.

**VIII. ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງອຸດົມໄຊ.**

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ບົວຈັນ ແກ້ວມະນີ** ຫົວໜ້າພະແນກນິຕິກໍາ, ກົມຄຸ້ມຄອງທະນາຄານທຸລະກິດ ເປັນຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ.

**IX. ສາຂາທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງຈໍາປາສັກ.**

1. ຍົກຍ້າຍ ແລະ ແຕ່ງຕັ້ງ**ທ່ານ ວຽງສະຫວັນ ໄຊຍະວົງ** ຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງອຸດົມໄຊ ເປັນຮັກສາການຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈໍາປາສັກ.

**X. ທະນາຄານສົ່ງເສີມກະສິກໍາ.**

1. ແຕ່ງຕັ້ງ**ທ່ານ ນ. ສົມຈັນ ນັນທະວົງ** ຫົວໜ້າພະແນກຄຸ້ມຄອງສາຂາທະນາຄານສົ່ງເສີມກະສິກໍາ ເປັນຮອງຜູ້ອໍານວຍການທະນາຄານສົ່ງເສີມກະສິກໍາ;

2. ແຕ່ງຕັ້ງ**ທ່ານ ສຸນທອນ ສຸພົມມະວົງ** ຫົວໜ້າທະນາຄານສົ່ງເສີມກະສິກໍາ ສາຂາສະຫວັນນະເຂດ ເປັນຮອງຜູ້ອໍານວຍການທະນາຄານສົ່ງເສີມກະສິກໍາ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ພົວພັນວຽກງານກ່ຽວຂ້ອງກັບພວກກ່ຽວຕາມລະບຽບການ.

**ຫົວໜ້າກົມຈັດຕັ້ງແລະພະນັກງານ**



ທະນາຄານແຫ່ງ ສ. ປ. ປ. ລາວ ★ ກົມຈັດຕັ້ງແລະພະນັກງານ

**ພານຸສັກ ແກ່ນວົງພະຈັນ**